ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

# ບົດບັນທຶກກອງປະຊຸມ

ຄັ້ງວັນທີ 18 ມັງກອນ 2024 ເວລາ 9:00 – 10:30 ໂມງ, ທີ່ຫ້ອງເຮັດວຽກໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຫ້ອງການ ຄຊກລ, ໄດ້ຈັດກອງປະຊຸມປະຈໍາອາທິດວັນທີ 18 ມັງກອນ 2024, ໃນກອງປະຊຸມຄັ້ງນີ້ມີຜູ້ເຂົ້າຮ່ວມທັງໝົດ: 03 ທ່ານ, ຍິງ 01 ທ່ານ, ເຊິ່ງມີລາຍຊື່ລະອຽດດັ່ງລຸ່ມນີ້:

❖ **ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຫ້ອງການ ຄຊກລ**

1. ທ່ານ ບຸນຕາວ ຈັນທະວົງສາ ຫົວໜ້າ ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ;
2. ທ່ານ ວິລະພົນ ພັນທະວົງ ວິຊາການ ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ;
3. ທ່ານ ນາງ ມ້ອກ ສົມດາລັດ ຜູ້ຊ່ວຍໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.

I. **ຜົນຂອງການປຶກສາຫາລືໃນກອງປະຊຸມ**

- ກ່ຽວກັບບົດລາຍງານໜ່ວຍງານ PO ໃຫ້ຮ່າງເປັນປະຈໍາເດືອນ, ເລື່ອງຂໍ້ມູນໃຫ້ໜ່ວຍງານຖານຂໍ້ມູນສະໜອງໃຫ້, ແຕ່ລະໜ່ວຍງານຕ້ອງໄດ້ກວດກາເບິ່ງຄືນ;
- ກຽວກັບການຂໍງົບປະມານ TT ເອກະສານຕ້ອງປະກອບມີ: ໜັງສືສະເໜີ, ແຜນການເດີນທາງ, ແຜນງົບປະມານ, ໃບບິນນໍ້າມັນລົດ, ໃບເຊັນຮັບນໍ້າມັນລົດ, ໃບເຊັນຮັບເງິນ, ຄ່າຂົນສົ່ງເອກະສານແຕ່ເມືອງ ຫາ ແຂວງໃຫ້ປະສານກັບໜ່ວຍງານການເງິນຄືນ;
- ໃຫ້ປະສານຫາໜ່ວຍງານການເງິນເພື່ອຂໍງົບປະມານ TT ໃຫ້ເມືອງທີ່ເກີດອຸບັດຕິເຫດ ຢູ່ແຂວງສະຫວັນນະເຂດ, ແຂວງອັດຕະປື ແລະ ແຂວງຄໍາມ່ວນ;
- ຫົວໜ້າໜ່ວຍງານ VA ຈະໄດ້ປຶກສາຫາລືກັບ TT ກໍລະນີມີບັນຫາການເດີນທາງແຕ່ເມືອງ ຫາ ບ້ານພົບຄວາມຫຍຸ້ງຫຍາກຖະໜົນຫົນທາງ;
- ພາຍໃນໄຕມາດ 01 ຈະໄດ້ຈັດກອງປະຊຸມກັບເມືອງຄື: 01. ເມືອງຄໍາເກີດ ແຂວງບໍລິຄໍາໄຊ, 02. ເມືອງລອງແຈ້ງ ແຂວງໄຊສົມບູນ ແລະ 03. ເມືອງກາສີ ແຂວງວຽງຈັນ;
- ເບິ່ງຄືນຂໍ້ມູນຜູ້ຖືກເຄາະຮ້າຍຈາກ ລບຕ, ຜູ້ໄດ້ຮັບການຊ່ວຍເຫຼືອ ທັງໝົດໃຫ້ມີຄວາມລະອຽດຖືກຕ້ອງ;
- ກະກຽມຄວາມພ້ອມ ອີງການ HI ຈະຊ່ວຍປັບປຸງມາດຕະຖານແຫ່ງຊາດຂອງໜ່ວຍງານ VA, EORE;
- ສຶກສາຄົ້ນຄ້ວາກ່ຽວກັບແຜນ ກິດຈະກໍາ, ແຜນງົບປະມານ ແຕ່ປີ 2007-2030;
- ໄຕມາດ 02 ໜ່ວຍງານ VA ລົງຕິດຕາມຊຸກຍູ້ການປະກອບແບບຟອມເກັບກໍາຂໍ້ມູນການຊ່ວຍເຫຼືອການຈັດຕັ້ງປະຕິບັດກິດຈະກໍາ ຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ໂຄງການ COPE;
- ຫົວໜ້າໜ່ວຍງານຕ້ອງເຂົ້າຮ່ວມການຈັດກອງປະຊຸມເຜຍແຜ່ນິຕິກໍາດໍາລັດ, ໃຫ້ແກ່ແຂວງ ໃນແຕ່ລະພາກ;
- ການອອກຂ່າວຂໍ້ມູນຈາກໜ່ວຍງານຕ້ອງເອກະພາບ, ມີຄວາມລະອຽດ, ຖືກຕ້ອງ, ຊັດເຈນ ເພື່ອປ້ອງກັນບັນຫາທີ່ຕາມມາ;
- ສໍາລັບກອງປະຊຸມ TWG ແຕ່ລະໜ່ວຍງານຕ້ອງເປັນເອກະພາບກັນ ຫ້ອງປະຊຸມ ຄໍາແປພາສາ, ຫູຟັງ;
- ການຕິດຕາມພະນັກງານແມ່ນມອບໃຫ້ຫົວໜ້າໜ່ວຍງານຕິດຕາມ;
- ການປະເມີນພະນັກງານຈະເບິ່ງຕາມເງື່ອນໄຂຂອງແຜນປະຈໍາປີ, ແຜນປະຈໍາໄຕມາດ ແລະ ປະຈໍາເດືອນ.

**ຫົວໜ້າໜ່ວຍງານ**
**ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ**

ບຸນຕາວ